**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 30 ພຶສພາ 2010 (05-30-2010)**

---

## <u>ເວລາການຂົ່ມຂູ່ມາຈາກຂ້າງນອກ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (1 ຊາມູເອນ 7:2-17)

### <u>ເປົ້າໝາຍຂອງບົດຮຽນ:</u>

ບົດຮຽນນີ້ ແມ່ນກ່ຽວກັບຊັຍຊະນະຂອງອິສຣາເອນ ທີ່ເມືອງມີຊະປາ ທີ່ເຕັມໄປດ້ວຍຄວາມຫວາດກົວ. ອິສຣາເອນປະສົບກັບການຂົ່ມຂູ່ຈາກພວກຟີລິສຕິນ, ແຕ່ພວກເຂົາເລືອກເອົາພຣະເຈົ້າ. ຜົນສຸດທ້າຍກໍໄດ້ປະສົບກັບຊັຍຊະນະ.

### <u>ຄວາມສຳຄັນຂອງບົດຮຽນ:</u>

ຄຣິສຕຽນເຄີຍໄດ້ປະສົບກັບການຂົ່ມຂູ່ຈາກຂ້າງນອກ ທີ່ພາໃຫ້ເກີດຄວາມຢ້ານກົວມາເລື້ອຍໆ. ໃນຖານະທີ່ເປັນຜູ້ທີ່ເຊື່ອ. ພວກເຂົາເຈົ້າຈຳເປັນຕ້ອງຮູ້ຈັກວິທີຕອບໂຕ້ກັບການຂົ່ມຂູ່ເຫລົ່ານີ້ ດັ່ງນັ້ນພວກເຮົາຈຶ່ງຈະພົບກັບຊັຍຊະນະ.

### <u>ຜົນສະທ້ອນຕໍ່ຊີວິດ:</u>

ບົດຮຽນນີ້ນຳເອົາຫລັກການທີ່ຈະຊ່ວຍທ່ານໃຫ້ເຂົ້າເຖິງ ຄວາມສັມພັນທີ່ເໝາະສົມກັບພຣະເຈົ້າໃນຖ້າງກາງການຂົ່ມຂູ່ຈາກທາງນອກ.

### <u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

### <u>ແນະນຳ:</u>

- ພວກເຮົາທຸກຄົນຮູ້ວ່າ ການຂົ່ມຂູ່ເລັກໆ ນ້ອຍໆທີ່ມາຈາກຂ້າງນອກ ສາມາດເຮັດໃຫ້ພວກເຮົາວຸ້ນວາຍ ເສັຽຄວາມຕັ້ງໃຈຂອງພວກເຮົາດ້ວຍ.
- ຫລາຍປານໃດ ຈຶ່ງຖືວ່າເປັນການລົບກວນຂົ່ມຂູ່ໃຫຍ່ຈາກພາຍນອກທີ່ໄດ້ມີຜົນກະທົບຕໍ່ຊີວິດຂອງພວກເຮົາ?
- ພຣະເຈົ້າຍັງປົກປ້ອງຄຸ້ມຄອງຢູ່ບໍ່?
- ອະທິບາຍ: ບົດຮຽນໃນມື້ນີ້ຈະສຳແດງສິ່ງທີ່ບໍ່ໜ້າເຊື່ອໃຫ້ພວກເຮົາໄດ້ເຫັນ ແລະຈະເຊື່ອໝັ້ນ.
- ແນ່ນອນປະຈຸບັນນີ້ພຣະເຈົ້າຍັງຊົງຄວບຄຸມໃນການປະເຊີນໜ້າຂອງການຂົ່ມຂູ່ພາຍນອກຢູ່.
- ຍັງມີການຂົ່ມຂູ່ຈາກພາຍນອກແນວໃດອີກແດ່ທີ່ພວກເຮົາໄດ້ຍິນ ໄດ້ພົບພໍ້?

- ການຂົ່ມຂູ່ເຫລົ່ານີ້ ໄດ້ມີຜົນສະທ້ອນຕໍ່ຄວາມເຊື່ອຂອງພວກເຮົາແນວໃດ?

## 1. <u>ຈົ່ງຖວາຍຕົວຕໍ່ພຣະເຈົ້າ:</u> (1 ຊາມູເອນ 7:2-6)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 7:2-6
- ຖ້າທ່ານບໍ່ແຖໜວດເຖິງ 20 ປີ ຫລືບໍ່ອາບນໍ້າເຖິງ 20 ປີ ແລ້ວຈະມີຫຍັງເກີດຂຶ້ນ?
- ທ່ານຄິດວ່າຊີວິດແຕ່ລະມື້, ແຕ່ລະວັນຂອງຄົນອິສຣາເອນໄດ້ເຫີນຫ່າງຈາກພຣະເຈົ້າ ໂດຍປະລະການຕິດຕາມພຣະເຈົ້ານັ້ນດ້ວຍເຫດຜົນອັນໃດ?
- ນຳພານັກຮຽນສົນທະນາເຣື່ອງດັ່ງຕໍ່ໄປນີ້: ຄືຕອນແຣກໆ ຊາມູເອນຈັດວາງຣະບຽບສຳລັບຄົນອິສຣາເອນ ແລະໃຫ້ຂຽນຄຳຂວັນໃສ່ກະດານ: (1) ກຳຈັດພຣະຕ່າງໆ ເຊົາກາບໄຫວ້ບູຊາຮູບໂຄຣົບ, (2) ອຸທິດຕົນຖວາຍແດ່ພຣະເຈົ້າ ແລະ (3) ນະມັສການແຕ່ພຣະຜູ້ເປັນເຈົ້າເທົ່ານັ້ນ.
- ພວກເຮົາສາມາດດຳເນີນຊີວິດໃນໄຊຍະຊະນະ ແລະມີອິສຣະພາບໃນຖ້າມກາງການປະເຊີນໜ້າກັບຄຳຂົ່ມຂູ່ພາຍນອກໂດຍປາສຈາກການທຳຕາມ 3 ຂັ້ນຂັ້ນຕອນທີ່ໄດ້ສົນທະນາກັນມາຂ້າງເທິງນີ້ໄດ້ບໍ່? ຂັ້ນຕອນຕ່າງໆເຫລົ່ານີ້ມີຄວາມກ່ຽວພັນກັບ ພຣະທັມອົພຍົບບົດທີ 20:3-4 ແລະມັດທາຍ 22:37-38 ແນວໃດ?
- ຂັ້ນຕອນຕ່າງໆ ເຫລົ່ານີ້ ພວກເຮົາຄວນຈະເອົາເປັນພື້ນຖານໃນການດຳຣົງຊີວິດຂອງພວກເຮົາ, ແຕ່ພິເສດແລະສຳຄັນຄືໃນເມື່ອປະເຊີນໜ້າກັບການຂົ່ມຂູ່ຈາກພາຍນອກ. ໃນເມື່ອພວກເຮົາຫາກເຫັນຄວາມຍິ່ງໃຫຍ່ ແລະພລັງອຳນາດສູງສຸດຂອງພຣະເຈົ້າ ແລະຈື່ໄດ້ວ່າໜ້າທີ່ຂອງພວກເຮົາຄື ຄວາມສັມພັນກັບພຣະອົງ, ຕິດຕາມເຊື່ອເພິ່ງໃນພຣະອົງ ແລ້ວພວກເຮົາຈະຜ່ານພົ້ນເວລາຫຍຸ້ງຍາກນັ້ນໆ.

## <u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> (1 ຊາມູເອນ 7:2-6)

1. ໃນຊີວິດຂອງພວກເຮົານັ້ນ ແມ່ນຫຍັງທີ່ພວກເຮົາຕ້ອງການເອົາອອກຈາກຊີວິດຂອງພວກເຮົາ?
2. ພວກເຮົາຈະຕ້ອງປະຕິບັດຕາມຂັ້ນຕອນໃດແດ່ ທີ່ຈະກຳຈັດສິ່ງເຫລົ່ານັ້ນຄື: ສິ່ງທີ່ພວກເຮົາຍົກສູງເໜືອພຣະເຈົ້ານັ້ນອອກໄປໄດ້?
3. ແມ່ນການກະທຳແນວໃດທີ່ສາມາດນຳພວກເຮົາໃຫ້ກັບມາອຸທິດຕົນຖວາຍແດ່ອົງພຣະຜູ້ເປັນເຈົ້າໃໝ່?
4. ທ່ານໄດ້ຖວາຍອຸທິດຕົນທາງຮ່າງກາຍຂອງທ່ານແດ່ພຣະເຈົ້າຄັ້ງສຸດທ້າຍໃນຕອນໃດ?
5. ການອຸທິດຖວາຍຕົນນີ້ແມ່ນທັງກຸ່ມຫລືຜູ້ດຽວຂອງຄົນອິສຣາເອນ?

## 2.<u>ຈົ່ງເອົາຊະນະຄວາມຢ້ານກົວ:</u> (1 ຊາມູເອນ 7:7-11)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 7:7-11
- ນັບເປັນຫລາຍໆປີ, ທີ່ຊົນຊາດອິສຣາເອນໄດ້ຕໍ່ສູ້ ກັບແຮງຕໍ່ຕ້ານຂອງພວກຟີລິສຕິນ ແມ່ນກະທັ້ງດຽວນີ້ກໍຍັງທຳການນີ້ຢູ່, ເຂົາເປັນສັຕຣູທີ່ທົວແຂງ, ຍາກທີ່ປາບໃຫ້ຊະນະ, ເຂົາເຈົ້າປະເຊີນແລ້ວປະເຊີນອີກ. ໃຫ້ແບ່ງປັນເຣື່ອງທີ່ທ່ານປະເຊີນໃນຊີວິດຂອງທ່ານໃຫ້ຄົນອື່ນຟັງ ເຊັ່ນ: ປັນຫາຕ່າງໆ, ຄືຣົດຍົນຂອງທ່ານ ເພແລ້ວ ກໍເພອີກ….., ສັດລ້ຽງຂອງທ່ານ ກັດຫຍ້ຳເກີບແລະອື່ນໆ, ຊຶ່ງປັນຫາເຫລົ່ານີ້ເກີດຂຶ້ນເລື້ອຍໆ.
- ບາງເທື່ອພວກເຮົາບໍ່ໄດ້ຊະນະສັຕຣູ ທີ່ພວກເຮົາໄດ້ປະເຊີນໜ້າມັນຄັ້ງທຳອິດ. ອ່ານພຣະທັມ ເອເຟໂຊ 6:10-13 ພວກເຮົາຕ້ອງລຸກຂຶ້ນຕໍ່ສູ້ດ້ວຍພລັງອຳນາດຂອງພຣະເຈົ້າ ຈຶ່ງຈະສາມາດຊະນະໄດ້.
- ກັບໄປຫາພຣະທັມ 1 ຊາມູເອນ 7:7-8. ຊຶ່ງຊີ້ໃຫ້ເຫັນຊຶ່ງເປັນການສັ່ງສອນພວກຟີລິສຕິນທີ່ຢ້ານກົວ

ພວກອິສຣາເອນຈິນຕົວສັ່ນ, ດ່ງວນີ້ເຂົາເຈົ້າເຊື່ອໄວ້ວາງໃຈໃນຣິດອຳນາດຂອງພຣະເຈົ້າທີ່ຊົງໄດ້ມີພລັງອຳນາດເໜືອສັຕຣູຂອງພວກເຂົາ.

- ພວກເຮົາບໍ່ໄດ້ຖືກຮຽກເອີ້ນໃຫ້ປ່ອຍປະລະເລີຍກັບຄວາມຢ້ານກົວຂອງພວກເຮົາ ຫລືປ່ອຍປະລະເລີຍຕໍ່ການປະເຊີນໜ້າກັບການຂົ່ມຂູ່ຈາກພາຍນອກທີ່ນຳເອົາຄວາມອັນຕະລາຍມາສູ່. ພວກເຮົາຮູ້ລົມມໍຣະສຸມໃຫຍ່, ຣິດຖືກທຳລາຍ, ແລະມີສິ່ງອື່ນຈຳນວນນັບພັນໆທີ່ມີອຳນາດທີ່ຈະປ່ຽນແປງຊີວິດຂອງພວກເຮົາຢູ່ຕລອດມາ. ຢ່າງໃດກໍຕາມ, ພວກເຮົາໄດ້ຄຳແນະນຳບໍ່ໃຫ້ຢ້ານກົວສິ່ງທີ່ມີອິດທິພົນເໜືອພວກເຮົາ, ເພາະວ່າພວກເຮົາຮູ້ວ່າຣິດອຳນາດຂອງພຣະເຈົ້າຍິ່ງໃຫຍ່ ເໜືອກວ່າອຳນາດເຫລົ່ານັ້ນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> (1 ຊາມູເອນ 7:7-11)

1. ແມ່ນຫຍັງທີ່ທ່ານໄດ້ເອົາມາພິຈາຣະນາໃນເຣື່ອງສັຕຣູຂອງທ່ານ?
2. ພຣະອົງໄດ້ຊົງຮຽກເອີ້ນໃຫ້ທ່ານກະທຳຕາມຣະດັບຂັ້ນຕອນອັນໃດແດ່ທີ່ຈະຕໍ່ສູ້ກັບສັຕຣູໄດ້?
3. ການນະມັສການໄດ້ຊ່ອຍພວກເຮົາດຳຣົງຊີວິດຢູ່ດ້ວຍຕາຂອງຄວາມເຊື່ອແນວໃດ?

## 3 . <u>ຈົ່ງຈົດຈຳລະນຶກເຖິງການຊ່ອຍເຫລືອຂອງພຣະເຈົ້າ :</u> (1 ຊາມູເອນ 7:12-17)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 7:12-17
- ແນະນຳໃຫ້ນັກຮຽນຈົດຈຳຫລາຍໆປັນຫາທີ່ຈະເກີດຂຶ້ນຕາມລຳດັບຂັ້ນຕອນ ໂດຍສະເພາະການຂົ່ມຂູ່ຈາກພາຍນອກ, ແຕ່ຖ້າເພິ່ງ ແລະເຊື່ອໄວ້ວາງໃຈໃນພຣະເຈົ້າແລ້ວກໍຈະໄດ້ມີຊີວິດຊັຍຊະນະ. ໃຫ້ເບິ່ງຄືນຂໍ້ທີ 13 ແລະຂໍ້ທີ 14, ທີ່ຣິດເດດທີ່ອິສຣາເອນໄດ້ຮັບຈາກພຣະເຈົ້າວ່າມີຫຍັງແດ່,.
- ມີແຕ່ພລັງອຳນາດດຽວຂອງພຣະເຈົ້າເທົ່ານັ້ນທີ່ໃຫ້ມີຊັຍຍຊະນະປັນຫາໄດ້ຫລາຍທີ່ ຫລາຍຢ່າງ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> 1 ຊາມູເອນ 7:12-17

1. ມີຫຍັງແດ່ທີ່ພວກເຮົາຄວນລະນຶກເຖິງການຊ່ອຍເຫລືອຂອງພຣະເຈົ້າ?
2. ໃນເພງສັຣເສີນບົດທີ 20:5 ເວົ້າເຖິງເຣື່ອງການທີ່ພວກເຮົາສເລີມສລອງຮ່ວມກັບບັນດາຜູ້ທີ່ເຊື່ອອື່ນໆທີ່ໄດ້ມີປະສົບການຊັຍຊະນະຜ່ານທາງຄວາມເຂັ້ມແຂງໃນພຣະເຈົ້າຢ່າງໃດ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ພຣະເຈົ້າຕ້ອງການໃຫ້ຄຣິສຕຽນ ຮັກສາຄວາມສັມພັນກັບພຣະອົງໃຫ້ເໝາະສົມ, ບໍ່ຫວັ່ນເກງຕໍ່ການກັບມາຂອງຄວາມຂົ່ມຂູ່ພາຍນອກ.
- ບັນດາຜູ້ທີ່ເຊື່ອທຸກຄົນຕ້ອງມາຫາພຣະເຈົ້າພ້ອມທັງຖ່ອມຕົນ ແລະໃຈອ່ອນສຸພາບ.
- ດ້ວຍຄວາມຊ່ອຍເຫລືອຂອງພຣະເຈົ້າພວກເຮົາຈຶ່ສາມາດຫລຸດພົ້ນ ແລະຊະນະຄວາມຢ້ານກົວດ້ວຍຄວາມເຊື່ອ.
- ຈົ່ງລຸກຂຶ້ນດ້ວຍຕົວຂອງພວກເຮົາເອງ Ebenezers (ກ້ອນຫີນສາມາດຊ່ອຍພວກເຮົາໃຫ້ຈົດຈຳ ການງານອັນຍິ່ງໃຫຍ່ທີ່ພຣະເຈົ້າໄດ້ຊົງກະທຳໃນຊີວິດຂອງພວກເຮົາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH